**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3060 / ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2018

# ຂໍ້ຕົກລົງ

# ວ່າດ້ວຍລະບຽບການລາຍງານຂໍ້ມູນຂອງບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພ

- ອີງຕາມ ກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ,ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ ສະບັບເລກທີ 1068 /ຄລປ ລົງວັນທີ 25 ກັນຍາ 2018.

## ລັດຖະມົນຕີກະຊວງການເງິນ ຕົກລົງ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ໃນການຕິດຕາມ-ກວດກາ, ມາດຕະການປັບໃໝ ແລະ ລົງໂທດຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ພ້ອມທັງໃຫ້ບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພອະທິບາຍ, ຊີ້ແຈງກ່ຽວກັບການດຳເນີນທຸລະກິດໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ທີ່ກ່ຽວຂ້ອງ ແລະ ໃຫ້ເປັນເອກະພາບ, ມີລະບົບການບໍລິຫານຂໍ້ມູນທີ່ດີ ແລະ ສົ່ງບົດລາຍງານເຖິງກະຊວງການເງິນໃຫ້ຄົບຖ້ວນ ແລະ ທັນເວລາ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບໍລິສັດປະກັນໄພທົ່ວໄປ, ບໍລິສັດປະກັນຊີວິດ, ບໍລິສັດປະກັນໄພລວມ (ປະກັນໄພທົ່ວໄປ ແລະ ປະກັນຊີວິດ) ແລະ ນາຍໜ້າປະກັນໄພ ທີ່ດຳເນີນທຸລະກິດໃນ ສປປ ລາວ.

## ໝວດທີ 2
## ການລາຍງານຂໍ້ມູນ ຂອງບໍລິສັດປະກັນໄພ

**ມາດຕາ 3 ການລາຍງານປະຈຳໄຕມາດ ຂອງບໍລິສັດປະກັນໄພ**

ບໍລິສັດປະກັນໄພ ຕ້ອງສົ່ງການລາຍງານປະຈຳໄຕມາດ ໃຫ້ກະຊວງການເງິນ ກ່ອນວັນທີ 20 ຂອງເດືອນມັງກອນ, ເມສາ, ກໍລະກົດ ແລະ ເດືອນຕຸລາ. ສຳລັບແບບຟອມການລາຍງານແມ່ນນຳໃຊ້ ດັ່ງນີ້:

- ບໍລິສັດປະກັນໄພທົ່ວໄປ: ນຳໃຊ້ແບບຟອມຕາມເອກະສານຊ້ອນທ້າຍ 1;